# ວິທີປູກ ເຫັດຕີນແຮດ

## ບົດນຳ

ເຫັດຕີນແຮດເປັນເຫັດພັນໃຫຍ່ ຈະສິ່ງເສີມເປັນພືດເສດຖະກິດໄດ້. ເປັນເຫັດຊະນິດນຶ່ງທີ່ນຳມາປະກອບອາຫານຈະມີກິ່ນຫອມ, ລົດຫວານ ເປັນອາຫານທີ່ປອດໄພຈາກສານເຄມີ .

ປະຈຸບັນນີ້, ຄົນເຮົາທີ່ຢາກໃຫ້ມີສຸຂະພາບແຂງແຮງດີ, ຕ້ອງປູກພືດກິນເອງເພື່ອໃຫ້ປອດໄພຈາກສານເຄມີ ດັ່ງນັ້ນຈະພາທ່ານໄປຮູ້ຈັກກັບການປູກເຫັດຕີນແຮດ

## ລັກສະນະເຫັດຕີນແຮດ

ເຫັດຕີນແຮດເປັນເຫັດຂະໜາດໃຫຍ່, ສາມາດຈະເລີນເຕີບໂຕໄດ້ດີໃນສະພາບພູມອາກາດທົ່ວໄປຂອງປະເທດ. ສາມາດນຳມາຮັບປະທານເປັນອາຫານໄດ້.

## ການເຮັດຫົວເຊື້ອເຫັດຕີນແຮດ

ການເຮັດຫົວເຊື້ອເຫັດຕີນແຮດນີ້ແມ່ນຄ້າຍຄືກັບການເຮັດຫົວເຊື້ອເຫັດທົ່ວໆໄປເຊິ່ງໃນຂັ້ນຕອນມີດັ່ງນີ້ :

### 1. <u>ການລ້ຽງເຊື້ອເຫັດໃນອາຫານວຸ້ນ</u>

ເຫັດຕີນແຮດຈັດເປັນເຫັດທີ່ສາມາດແຍກເນື້ອເຍື່ອຈາກດອກເຫັດນຳມາລ້ຽງໃນອາຫານວຸ້ນ ( P D A) ໄດ້ດີຊະນິດນຶ່ງ, ໂດຍເຮັດການຄັດເລືອກດອກເຫັດທີ່ມີຂະໜາດໃຫຍ່ ນ້ຳໜັກດີບໍ່ມີເຊື້ອພະຍາດລົບກວນ. ແລ້ວນຳເອົາມາລ້ຽງໃນອາຫານວຸ້ນໄດ້ 7 — 10 ວັນເສັ້ນໄຍເຫັດຕີນແຮດກໍ່ຈະເລີນເຕີບໂຕ ແຜ່ຂະຫຍາຍເຕັມໜ້າອາຫານວຸ້ນ.



ນຳເຊື້ອເຫັດວາງໃສອາຫານວຸ້ນ

### 2. ການເຮັດກ້ອນເຊື້ອເຫັດຕີນແຮດ

ຈະມີລັກສະນະຄ້າຍຄືການເຮັດເຫັດນາງລົມນາງຟ້າ ໂດຍການປະສົມວັດສະດຸທີ່ໃຊ້ປູກເຊັ່ນຂີ້ເລື່ອຍຈາກນັ້ນຈຶ່ງຫົດນ້ຳ ແລະ ປັບຄວາມຊຸ່ມໃຫ້ເໝາະສົມ, ຈາກນັ້ນຈຶ່ງນຳ





ວັດສະດຸມາບັນຈຸລົງຖົງຢາງກັນຮ້ອນ 6 X 12 ນີ້ວ ຖົງລະ 8 ຂີດ ຫາ 1 ກິໂລ, ແລ້ວເອົາປອກຄໍຢາງມາສຸບໃສ່ປາກຖົງຢາງ , ອັດດ້ວຍຝ້າຍ, ຫຸ້ມດ້ວຍເຈ້ຍ ຮັດດ້ວຍຢາງບ້ວງ, ແລ້ວນຳຖົງທີ່ບັນຈຸຂີ້ເລື່ອຍ ໄປໜຶ້ງຂ້າເຊື້ອປະມານ 3 — 4 ຊົ່ວໂມງນັບ ຈາກນ້ຳຝົດ, ເມື່ອຖົງຂີ້ເລື່ອຍເຢັນແລ້ວຈຶ່ງທຳການເຂ່ຍເຊື້ອຈາກນັ້ນບົ່ມຖົງກ້ອນເຊື້ອເຫັດຕີນແຮດປະມານ 40 — 60 ວັນ ອຸນນະພູມໃນການບົ່ມ 28 ອົງສາເຊ ຫາ 38 ອົງສາເຊ.



ຖົງກ້ອນເຊື້ອເຫັດ

### 3. ສູດປະສົມຂີ້ເລື່ອຍ

| | |
|---|---|
| • ຂີ້ເລື່ອຍໄມ້ເນື້ອອ່ອນ | 100 ກລ |
| • ຮຳອ່ອນ | 10 ກລ |
| • ຢິບຊຳ | 1 — 2 ກລ |
| • ດີເກືອ | 2 ຂີດ |
| • ປູນຂາວ | 1 ກລ |
| • ຄວາມຊຸ່ມ | 60 — 65 % |

## 4. ການຕຽມວັດສະດຸປູກ

4.1 ດິນປົ່ນທີ່ຂຸດເລິກຈາກຜິວດິນ 25 ຊມ (ໃນກໍລະນີບໍ່ມີການປູກຜັກເທິງໜ້າດິນ

4.2 ກ້ອນເຊື້ອເຫັດຕີນແຮດ ທີ່ມີ ເສັ້ນໄຍເດີນເຕັມຖົງກ້ອນເຊື້ອ.( ພື້ນທີ່ 1 ແມັດໃຊ້ກ້ອນເຊື້ອ 100 ຖົງ).

4.3 ໜານປູກ ຄວນບໍ່ໃຫ້ນ້ຳຂັງ

4.4 ຝຸ່ນຄອກ ຫຼື ຝຸ່ນບົ່ມເກົ່າ

4.5 ຂຸດດິນໃຫ້ເລິກ 20 — 25 ຊມ ຂະໜາດຂອງໜານ 1 X 4 ແມັດ ຫຼື ຍາວກວ່ານັ້ນ ຕາມແຕ່ຄວາມ ຕ້ອງການ.

4.6 ເມື່ອຕຽມໜານປູກແລ້ວໃຫ້ນຳຖົງກ້ອນເຊື້ອສີກຖົງຢາງອອກໃຫ້ຍັງເຫຼືອແຕ່ກ້ອນເຊື້ອ, ແລ້ວນຳລົງດິນໃຫ້ຕິດກັນຈົນເຕັມໜານປູກ. ເພື່ອໃຫ້ເສັ້ນໄຍຂອງແຕ່ລະກ້ອນປະສານກັນຢ່າງໄວ, ເພື່ອໃຫ້ເປັນເນື້ອດຽວກັນຈາກນັ້ນ ນຳດິນປົ່ນທີ່ຕຽມໄວ້ມາປົກເທິງກ້ອນເຊື້ອ, ແລ້ວນຳເອົາແກ່ນຜັກມາປູກໃສ່ເທິງໜານປູກເຫັດ ອາຍຸປະມານ 1— 2 ເດືອນ, ນຳເຟືອງມາປົກແກ່ນຜັກ ແລະ ຫົດນ້ຳໃຫ້ຊຸ່ມ. ຄວນຮັກສາຄວາມຊຸ່ມຢ່າໃຫ້ແຫ້ງຜັກທີ່ປູກຄວນເກັບໄດ້ໃນໄລຍະ 40 — 60 ວັນ ຊຶ່ງລະຫວ່າງນັ້ນເຊື້ອເຫັດຈະເລີ້ມອອກ

ດອກ, ເມື່ອເກັບຜັກລຸ້ນທຳອິດແລ້ວກໍ່ຄວນໃຫ້ເຮັດຮົ່ມໃນໜານໂດຍໃຊ້ຕານ່າງເກັບແສງ 60 — 80 % ເຊິ່ງໃຫ້ສູງ 2,50 ແມັດ ຫຼືຈະໃຊ້ກ້ານໝາກພ້າວກໍ່ໄດ້. ສະນັ້ນຖ້າຫາກວ່າ, ເກັບຜັກໄປແລ້ວນັ້ນຄວນປູກຜັກຊີ ຫຼື ຜັກກະລ່ຳໃບໃນໜານທີ່ຢູ່ຮົ່ມນັ້ນ ຄວນນຳດິນປະສົມປຸຍອິນຊີໂຣຍກ່ອນປູກຜັກ ແລ້ວນຳເຟືອງມາຄຸມອີກເທື່ອໜຶ່ງ ໃນລະຫວ່າງທີ່ຜັກເກີດຂຶ້ນ ເຫັດຕີນແຮດກໍ່ຈະເກີດຂຶ້ນ ແລະ ສາມາດເກັບດອກເຫັດໄດ້. ເຫັດຕີນແຮດຈະໃຊ້ເວລາປະມານ 30 — 45 ວັນ ໃນການເກີດດອກແຕ່ຖ້າອຸນນະພູມຕ່ຳໃນລະດູໜາວ ກໍ່ຈະອອກດອກຊ້າປະມານ 45 — 60 ວັນ. ຫຼັງຈາກເກີດດອກຈະໃຊ້ເວລາ 7 — 10 ວັນ ກໍ່ຈະເກັບຜົນຜະລິດໄດ້, ຂະໜາດນ້ຳໜັກຂອງດອກເຫັດຂຶ້ນຢູ່ກັບຈຳນວນຖົງທີ່ໃຊ້ປູກ1 ຖົງໃຫ້ຜົນຜະລິດປະມານ 1 — 2 ກລ / ປີ ບາງກຸ່ມໜັກເຖິງ 10 ກລ .

## 5. ການເບິ່ງແຍງຮັກສາເຫັດຕີນແຮດ

ລະຫວ່າງຜັກຊຸດສອງຈະເລີນເຕີບໂຕໃຫ້ຫົດນ້ຳຕາມປົກກະຕິຮັກສາຄວາມຊຸ່ມຢ່າໃຫ້ແຫ້ງ, ສາມາດເກັບຜັກ ແລະເຫັດຄຽງຄູ່ກັນໄປດ້ວຍໂດຍການຫົດນ້ຳຄັ້ງດຽວໄດ້ປະໂຫຍດທັງຜັກ ແລະເຫັດ.

Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ວິທີປການປູກ
# ເຫັດຕີນແຮດ



ຂຽນໂດຍ: ໜ່ວຍງານສົ່ງເສີມວິຊາຊີບ
ໂທລະສັບ: (021) 740252
ແຟກ: (021) 740252
ສະໜັບສະໜູນໂດຍ: ໂຄງການ ສົ່ງເສີມ ກະສິກຳ (*LEAP*)